ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ...2986...../ກປ
ນະຄອນຫຼວງວຽງຈັນ, ວັນທີ...28..ມິຖຸນາ 2019

# ຂໍ້ຕົກລົງ
## ວ່າດ້ວຍມາດຕະການສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມປູກຝັງ ສະບັບເລກທີ 1045/ກປຝ, ລົງວັນທີ 22 ພຶດສະພາ 2019.

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຂັ້ນຕອນ ແລະ ວິທີການ ກ່ຽວກັບ ການເຈລະຈາເຕັກນິກເປີດຕະຫຼາດ, ການຄຸ້ມຄອງລະບົບສຸຂານາໄມພືດ ແລະ ການຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ລວມທັງຂໍ້ກຳນົດເງື່ອນໄຂດ້ານສຸຂານາໄມພືດ ຂອງປະເທດນຳເຂົ້າ ແນໃສ່ປົກປ້ອງການຜະລິດກະສິກຳ ແລະ ອຳນວຍຄວາມສະດວກທາງດ້ານການຄ້າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ມາດຕະການສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**

ມາດຕະການສຸຂານາໄມພືດ ສຳລັບການສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນການປະຕິບັດມາດຕະການສຸຂານາໄມພືດ ທີ່ປະເທດນຳເຂົ້າໄດ້ກຳນົດໄວ້ ຫຼື ຕາມມາດຕະການສາກົນດ້ານສຸຂານາໄມພືດ ທີ່ກ່ຽວຂ້ອງໃນທຸກຂັ້ນຕອນການຜະລິດພືດ ເພື່ອສົ່ງອອກ ໂດຍເລີ່ມຈາກການຈັດການຄວາມສ່ຽງຂອງສັດຕູພືດໃນພື້ນທີ່ການຜະລິດ ແລະ ການປະຕິບັດດ້ານສຸຂານາໄມພືດ ພາຍຫຼັງການເກັບກ່ຽວ, ການບຳບັດ, ການກວດກາ, ການຢັ້ງຢືນສຸຂານາໄມພືດ ແລະ ການເຈລະຈາເຕັກນິກເປີດຕະຫຼາດ ກ່ອນການສົ່ງອອກ.

ມາດຕະການສຸຂານາໄມພືດ ສຳລັບການສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນການປະຕິບັດມາດຕະການດ້ານສຸຂານາໄມພືດ ຕໍ່ກັບຊຸດສິນຄ້າຈາກປະເທດໃດໜຶ່ງ ແລ້ວສົ່ງອອກຕໍ່ໄປຍັງປະເທດອື່ນ ເປັນຕົ້ນ ການກວດກາ, ການບຳບັດ ແລະ ການຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ຊຶ່ງຊຸດສິນຄ້າດັ່ງກ່າວ ມີການ ເກັບມ້ຽນ, ແຍກ, ລວມເຂົ້າກັນກັບຊຸດສິນຄ້າອື່ນ ຫຼື ມີການປ່ຽນແປງການບັນຈຸຫຸ້ມຫໍ່.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກົດໝາຍ** ໝາຍເຖິງ ກົດໝາຍວ່າດ້ວຍການປ້ອງກັນ ແລະ ກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
2. **ສິ່ງປົນເປື້ອນ** ໝາຍເຖິງ ສັດຕູພືດ ຫຼື ວັດຖຸຕ້ອງຄວບຄຸມຕ່າງໆ ທີ່ປົນຢູ່ໃນຊຸດສິນຄ້າ, ສະຖານທີ່ເກັບມ້ຽນ, ຕູ້ຂົນສົ່ງ ຫຼື ຕູ້ຄອນເທນເນີ ແຕ່ບໍ່ແມ່ນການຕິດແປດຈາກແຫຼ່ງກຳເນີດສິນຄ້າ;
3. **ການຢັ້ງຢືນ** ໝາຍເຖິງ ຄວາມຖືກຕ້ອງ ແລະ ສອດຄ່ອງ ຕາມຂັ້ນຕອນວິທີການທາງດ້ານສຸຂານາໄມພືດ ເພື່ອອອກໃບຢັ້ງຢືນສຸຂານາໄມພືດ ເປັນທາງການ;
4. **ໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່** ໝາຍເຖິງ ເອກະສານຢັ້ງຢືນທາງການ ໃນຮູບແບບເຈ້ຍ ຫຼື ເອເລັກໂຕຣນິກ ຊຶ່ງສອດຄ່ອງຕາມແບບພິມຂອງອົງການປ້ອງກັນພືດສາກົນ ຕາມທີ່ກຳນົດໄວ້ໃນ ມາດຕາ V ຂອງ IPPC;
5. **IPPC (International Plant Protection Convention)** ໝາຍເຖິງ ສົນທິສັນຍາປ້ອງກັນພືດສາກົນ (ສະບັບປັບປຸງ ປີ 1997);
6. **NPPO (National Plant Protection Organization)** ໝາຍເຖິງ ກົມປູກຝັງ ຊຶ່ງເປັນຕົວແທນໃຫ້ອົງການປ້ອງກັນພືດແຫ່ງຊາດ ຂອງ ສປປ ລາວ ທີ່ກຳນົດໄວ້ໃນ ມາດຕາ IV ຂອງ IPPC;
7. **ການຕິດແປດ** ໝາຍເຖິງ ການແຜ່ຂະຫຍາຍ ຂອງສັດຕູພືດທີ່ມີຊີວິດ ລວມທັງແມງໄມ້ ແລະ ເຊື້ອພະຍາດ ຢູ່ນຳພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃນຊຸດສິນຄ້າ;
8. **ສະຖານທີ່ປະກອບການຜະລິດ** ໝາຍເຖິງ ຟາມ, ໂຮງເຮືອນ, ຖັງໄຊໂລ ຫຼື ສະຖານທີ່ທີ່ມີເປົ້າໝາຍເພື່ອ ປູກ, ເກັບກ່ຽວ, ຄັດແຍກ, ຈັດການ, ບັນຈຸ, ຫຸ້ມຫໍ່ ຫຼື ເກັບຮັກສາ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ມີເປົ້າໝາຍເພື່ອສົ່ງອອກ;
9. **ການບຳບັດ** ໝາຍເຖິງ ການທຳລາຍ, ການຢັບຢັ້ງ, ການຄັດແຍກສັດຕູພືດ ອອກ ຫຼື ວິທີການອື່ນທີ່ເປັນທາງການ ເພື່ອເຮັດໃຫ້ສັດຕູພືດ ເປັນໝັນ, ອ່ອນແອ ຫຼື ບໍ່ໃຫ້ຂະຫຍາຍໂຕ ໂດຍຜ່ານຂະບວນການໃດໜຶ່ງ ເປັນຕົ້ນ ການສີດພົ່ນກຳຈັດສັດຕູພືດ ຫຼື ພະຍາດພືດຕິດແປດ, ການນຳໃຊ້ອຸນຫະພູມ, ການຮົມຄວັນ, ທາດເຄມີ, ນຳໃຊ້ເຄມີ ຫຼື ສູນຍາກາດ;
10. **ການຮົມຢາ** ໝາຍເຖິງ ກິດຈະກຳໜຶ່ງຂອງການບຳບັດ ໂດຍການນຳໃຊ້ທາດເຄມີ ຫຼື ທາດອາຍ ຊຶ່ງສາມາດແຊກຊຶມທົ່ວສິນຄ້າໄດ້ທັງໝົດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບ ການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ.

# ໝວດທີ 2
# ການເຈລະຈາເປີດຕະຫຼາດ

**ມາດຕາ 5 ຂັ້ນຕອນການສະເໜີເປີດຕະຫຼາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕ້ອງດຳເນີນການຕາມຂັ້ນຕອນ ດັ່ງນີ້:

1. ຍື່ນຄຳຮ້ອງ ເຖິງ ກົມປູກຝັງ ຕາມແບບພິມ ແລະ ປຶ້ມແນະນຳ ທີ່ກົມປູກຝັງວາງອອກ ຫຼື ສາມາດດາວໂຫຼດໃນເວັບໄຊ www.doa.maf.gov.la;
2. ກົມປູກຝັງ ແຕ່ງຕັ້ງຄະນະຮັບຜິດຊອບເຈລະຈາເປີດຕະຫຼາດ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຊຶ່ງປະກອບດ້ວຍບຸກຄົນທີ່ມີວິຊາສະເພາະ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;
3. ຄະນະຮັບຜິດຊອບເຈລະຈາເປີດຕະຫຼາດ ຄົ້ນຄວ້າ ແລະ ພິຈາລະນາຄຳຮ້ອງຂອງຜູ້ສະເໜີ ໂດຍສະເພາະຄວາມສາມາດໃນການແຂ່ງຂັນ ແລະ ການສະໜັບສະໜູນດ້ານການຕະຫຼາດ, ຖານະດ້ານການເງິນ ແລະ ຄວາມພ້ອມດ້ານຊັບພະຍາກອນ, ຊຸດສິນຄ້າດັ່ງກ່າວຈັດຢູ່ໃນແຜນຍຸດທະສາດ ແລະ ບູລິມະສິດສຳຄັນ ສຳລັບການສົ່ງອອກ ຂອງ ສປປ ລາວ ຫຼື ບໍ່ ລວມທັງ ປະລິມານ ແລະ ກຳນົດໄລຍະເວລາ ການສົ່ງອອກ ແລະ ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບ.

**ມາດຕາ 6 ມາດຕະຖານແລະເງື່ອນໄຂ ຂອງຄະນະຮັບຜິດຊອບເຈລະຈາເປີດຕະຫຼາດ**

ຜູ້ທີ່ຈະປະກອບເຂົ້າໃນ ຄະນະຮັບຜິດຊອບເຈລະຈາເປີດຕະຫຼາດ ຕ້ອງມີມາດຕະຖານ ແລະ ເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ມີຄວາມຮູ້ ດ້ານການວິໄຈຄວາມສ່ຽງສຸຂະພາບພືດ;
2. ມີວິຊາສະເພາະ ດ້ານວິທະຍາສາດພືດ, ປູກຝັງ, ປ້ອງກັນພືດ ຫຼື ມີປະສົບການດ້ານວິທະຍາການຫຼັງການເກັບກ່ຽວ;
3. ມີປະສົບການດ້ານອຸດສາຫະກຳປຸງແຕ່ງ;
4. ມີປະສົບການດ້ານການຕະຫຼາດ.

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບເຈລະຈາເປີດຕະຫຼາດ**

ຄະນະຮັບຜິດຊອບເຈລະຈາເປີດຕະຫຼາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊອກຫາຂໍ້ມູນ ແລະ ສັງລວມເອກະສານທີ່ພົວພັນກັບການສະເໜີເປີດການເປີດຕະຫຼາດ;
2. ກຽມເອກະສານ ປຶ້ມເຈລະຈາເປີດຕະຫຼາດ ເພື່ອສະເໜີ ຕໍ່ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ;
3. ກຽມປຶ້ມສັງລວມຫຍໍ້ ເພື່ອປຶກສາຫາລື ກັບອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ;
4. ຄົ້ນຄວ້າ ແລະ ພິຈາລະນາ ຕໍ່ຜົນການວິໄຈຄວາມສ່ຽງສັດຕູພືດ ຂອງປະເທດນຳເຂົ້າ;
5. ວິເຄາະຂໍ້ມູນທາງດ້ານວິຊາການ, ໃຫ້ຄຳແນະນຳທາງດ້ານນະໂຍບາຍ ແລະ ການດຳເນີນງານທາງດ້ານລະບຽບການ ແກ່ຜູ້ສົ່ງອອກ;
6. ເກັບຮັກສາຂໍ້ມູນ ຂອງປະເທດນຳເຂົ້າ ເພື່ອເປັນບ່ອນອີງໃນການເຈລະຈາເປີດຕະຫຼາດ ໃນຄັ້ງຕໍ່ໄປ;
7. ຕິດຕາມ ປຶ້ມສະເໜີເຈລະຈາເປີດຕະຫຼາດ ນຳອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ ໃນກໍລະນີມີການດັດແກ້ຖ້າມີຄວາມຈຳເປັນ.

## ໝວດທີ 3
## ການຄຸ້ມຄອງ ສະຖານທີ່ປະກອບການຜະລິດ ສໍາລັບການສົ່ງອອກ

**ມາດຕາ 8 ການຂຶ້ນທະບຽນສະຖານທີ່ປະກອບການຜະລິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນທຸລະກິດ ເພື່ອສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຕ້ອງໄດ້ຂຶ້ນທະບຽນສະຖານທີ່ປະກອບການຜະລິດ ນໍາກົມປູກຝັງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ປະເທດຄູ່ຄ້າ ຫຼື ປະເທດນໍາເຂົ້າ ເປັນຜູ້ກໍານົດ;
2. ຜູ້ສົ່ງອອກ ໄດ້ຖືກແຈ້ງເຕືອນຈາກປະເທດນໍາເຂົ້າ ກໍລະນີບໍ່ປະຕິບັດຕາມຂໍ້ກໍານົດເງື່ອນໄຂດ້ານສຸຂານາໄມພືດ ຂອງປະເທດນໍາເຂົ້າ.

ຜູ້ສະເໜີຂຶ້ນທະບຽນສະຖານທີ່ປະກອບການຜະລິດ ຕ້ອງປະກອບຂໍ້ມູນ ກ່ຽວກັບ ຂໍ້ກໍານົດເງື່ອນໄຂສະເພາະໃນການວາງແຜນ ສໍາລັບ ການປູກ, ການປະຕິບັດງານ ແລະ ການບົວລະບັດຮັກສາການຜະລິດ ຕາມແບບພິມ ທີ່ ກົມປູກຝັງ ກໍານົດ ພ້ອມທັງເສຍຄ່າທໍານຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 9 ເງື່ອນໄຂການຂຶ້ນທະບຽນສະຖານທີ່ປະກອບການຜະລິດ**

ສະຖານທີ່ປະກອບການຜະລິດ ທີ່ຈະໄດ້ຮັບການຂຶ້ນທະບຽນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີການບັນທຶກຂໍ້ມູນເອກະສານ ກ່ຽວກັບ ສະຖານທີ່ປະກອບການຜະລິດ ແລະ ການເຄື່ອນໄຫວ ລວມທັງ ໃບສັ່ງຊື້ສິນຄ້າ, ໃບຢັ້ງຢືນແຫຼ່ງກໍາເນີດພືດ, ສັນຍາ ແລະ ເອກະສານທາງດ້ານການຄ້າອື່ນກ່ຽວຂ້ອງ;
2. ມີຄູ່ມືດໍາເນີນງານ ກ່ຽວກັບ ການຜະລິດພືດ ແລະ ແບບແຜນການຈັດການສັດຕູພືດ ທີ່ກໍານົດໃຫ້ໂດຍປະເທດນໍາເຂົ້າ ລວມທັງ ເອກະສານການແບ່ງຄວາມຮັບຜິດຊອບ ໃນການຈັດການບໍລິການ;
3. ມີຂັ້ນຕອນ ແລະ ວິທີການ ເພື່ອກວດສອບບັນຫາການປະຕິບັດບໍ່ຖືກຕ້ອງ ແລະ ມີມາດຕະການແກ້ໄຂ;
4. ມີບຸກຄະລາກອນ, ຊ່ຽວຊານ, ເຄື່ອງມືອໍານວຍຄວາມສະດວກ ແລະ ອຸປະກອນ ສໍາລັບການເຄື່ອນໄຫວກິດຈະການ;
5. ມີລະບົບການກວດກາຍ້ອນຫຼັງ;
6. ປະຕິບັດມາດຕະການສຸຂານາໄມພືດສະເພາະ ສໍາລັບການຜະລິດ ຫຼື ສິນຄ້າສະເພາະໃດໜຶ່ງທີ່ຈະສົ່ງອອກ ຊຶ່ງກໍານົດໄວ້ໃນບົດແນະນໍາ ຂອງ ກົມປູກຝັງ.

**ມາດຕາ 10 ການພິຈາລະນາຂຶ້ນທະບຽນສະຖານທີ່ປະກອບການຜະລິດ**

ພາຍຫຼັງໄດ້ຮັບໃບສະເໜີຂຶ້ນທະບຽນສະຖານທີ່ປະກອບການຜະລິດ, ກົມປູກຝັງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ດັ່ງນີ້:

1. ກວດກາເອກະສານ ທີ່ປະກອບມານໍາໃບສະເໜີ;
2. ດໍາເນີນການປະເມີນສະຖານທີ່ປະກອບການຜະລິດ ພາຍໃນ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບໃບສະເໜີ;
3. ອອກໃບທະບຽນສະຖານທີ່ປະກອບການຜະລິດ ໃນກໍລະນີ ເອກະສານສະເໜີມານັ້ນ ຖືກຕ້ອງ ຫຼື ປະຕິເສດການອອກໃບທະບຽນ ພ້ອມທັງແຈ້ງຕອບເປັນລາຍລັກອັກສອນ ໃນກໍລະນີ ບໍ່ຖືກຕ້ອງ ແລະ ຄົບຖ້ວນຕາມເງື່ອນໄຂຂອງການຂຶ້ນທະບຽນ.

**ມາດຕາ 11 ມາດຕະການສຸຂານາໄມພືດ ສຳລັບສະຖານທີ່ປະກອບການການຜະລິດ ພາຍຫຼັງຂຶ້ນທະບຽນ**

ເຈົ້າຂອງສະຖານທີ່ປະກອບການການຜະລິດ ທີ່ໄດ້ຮັບການຂຶ້ນທະບຽນ ຕ້ອງປະຕິບັດ ດັ່ງນີ້:

1. ດຳເນີນຕາມແຜນການທີ່ກຳນົດໄວ້ ພ້ອມທັງຮັກສາສະຖານທີ່ປະກອບການຜະລິດ ບໍ່ໃຫ້ມີສັດຕູພືດຄວບຄຸມ ແລະ ການປົນເປື້ອນອື່ນ;
2. ຮັບປະກັນ ບໍ່ໃຫ້ສັດລ້ຽງ ເຂົ້າເຖິງສະຖານທີ່ປະກອບການຜະລິດ;
3. ສະຖານທີ່ປະກອບການຜະລິດ ຕ້ອງສະອາດ ໂດຍການຮັບຮອງຈາກ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
4. ໃນກໍລະນີ ມີການປ່ຽນແປງຂໍ້ກຳນົດເງື່ອນໄຂ ຕ້ອງດັດປັບແຜນດຳເນີນງານ ເພື່ອບໍ່ໃຫ້ມີຄວາມສ່ຽງເພີ່ມ ທີ່ເປັນສາຍເຫດພາໃຫ້ເກີດຄວາມບໍ່ຖືກຕ້ອງ;
5. ອຸປະກອນ ທີ່ນຳໃຊ້ສຳລັບການບຳບັດວັດຖຸຕ້ອງຄວບຄຸມ ຕ້ອງຖືກຕິດຕັ້ງ, ທົດສອບ ແລະ ປົວລະບັດຮັກສາ ໃຫ້ສອດຄ່ອງກັບມາດຕະຖານ ແລະ ວິທີການ ຂອງກົມປູກຝັງ;
6. ສະຖານທີ່ປະກອບການຜະລິດ ຕ້ອງມີການບັນທຶກ ແລະ ເກັບຮັກສາຂໍ້ມູນໄວ້ ສາມປີ ດັ່ງນີ້:
   - ວິທີການຄວບຄຸມສັດຕູພືດ ແລະ ການບຳບັດ ທີ່ໄດ້ປະຕິບັດໃນສະຖານທີ່ປະກອບການຜະລິດ;
   - ວັນ, ເດືອນ, ປີ ທີ່ໄດ້ຮັບ ວັດຖຸຕ້ອງຄວບຄຸມ ແລະ ກິດຈະການທີ່ໄດ້ປະຕິບັດພາຍຫຼັງການເກັບກ່ຽວ;
   - ວັນ, ເດືອນ, ປີ ຂົນສົ່ງ ຈາກສະຖານທີ່ປະກອບການຜະລິດ.
7. ສຳລັບຢາປາບສັດຕູພືດ ແລະ ເຄມີອື່ນ ທີ່ນຳໃຊ້ໃນສະຖານທີ່ປະກອບການຜະລິດ ຕ້ອງເກັບຮັກສາ, ຈັດການ ແລະ ນຳໃຊ້ ໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ;
8. ຄວາມປອດໄພ ຂອງອາຫານ, ສຸຂະພາບ ແລະ ສຸຂານາໄມ ຂອງຜູ້ອອກແຮງງານ ລວມທັງມາດຕະຖານຄຸນນະພາບ ທີ່ນຳໃຊ້ໃນສະຖານທີ່ປະກອບການຜະລິດ ແລະ ການຈັດການຫຼັງການເກັບກ່ຽວຂອງສິນຄ້າ ຕ້ອງປະຕິບັດຕາມ ບົດແນະນຳຂອງກົມປູກຝັງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ;
9. ອຳນວຍຄວາມສະດວກ ໃຫ້ແກ່ການກວດກາ ແລະ ການອອກໃບຢັ້ງຢືນສຸຂານາໄມພືດ.

**ມາດຕາ 12 ການກວດກາສະຖານທີ່ປະກອບການຜະລິດ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງດຳເນີນການກວດກາສະຖານທີ່ປະກອບການຜະລິດ ທີ່ໄດ້ຂຶ້ນທະບຽນ ຢ່າງເປັນປົກກະຕິ ດັ່ງນີ້:

1. ກວດກາ ສາມຄັ້ງຕໍ່ປີ ສຳລັບ ດອກໄມ້ປະດັບ, ພືດ ແລະ ຜົນຜະລິດພືດສົດ;
2. ກວດກາ ສອງຄັ້ງຕໍ່ປີ ສຳລັບເມັດພັນພືດ, ແກ່ນພືດ ແລະ ຜະລິດຕະພັນພືດອື່ນ.

ໃນກໍລະນີ ມີການສະເໜີຈາກປະເທດນຳເຂົ້າ ໃຫ້ມີການກວດກາ ແລະ ຢັ້ງຢືນ ສະຖານທີ່ປະກອບການຜະລິດ, ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງດຳເນີນການກວດກາ ແລະ ອອກໃບຢັ້ງຢືນການກວດກາສະຖານທີ່ປະກອບການຜະລິດ ຕາມເງື່ອນໄຂຂອງປະເທດນຳເຂົ້າ.

**ມາດຕາ 13 ການໂຈະ ຫຼື ຖອນ ໃບທະບຽນສະຖານທີ່ປະກອບການຜະລິດ**

ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີສິດໂຈະ ໃບທະບຽນສະຖານທີ່ປະກອບການຜະລິດ ເພື່ອໃຫ້ເຈົ້າຂອງສະຖານທີ່ປະກອບການຜະລິດ ຊອກຫາວິທີທາງແກ້ໄຂ ຫຼື ປັບປຸງໃຫ້ຄືນສູ່ສະພາບປົກກະຕິ ຕາມຫຼັກວິຊາການ ໃນວັນເວລາທີ່ແນ່ນອນ ຕາມກໍລະນີ ເຫັນວ່າ ປະຕິ

ບັດບໍ່ຖືກຕ້ອງ ຕາມມາດຕາ 11 ຂອງຂໍ້ຕົກລົງສະບັບນີ້, ກວດພົບສັດຕູພືດຄວບຄຸມ ແລະ ບໍ່ປະຕິບັດຕາມຂໍ້ກຳນົດເງື່ອນໄຂຂອງການນຳເຂົ້າ.

ໃນກໍລະນີ ເຈົ້າຂອງສະຖານທີ່ປະກອບການຜະລິດ ບໍ່ສາມາດແກ້ໄຂ ຫຼື ປັບປຸງພາຍໃນວັນເວລາທີ່ກຳນົດໄວ້ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຈະຖອນ ໃບທະບຽນສະຖານທີ່ປະກອບການຜະລິດ ຕາມກົດໝາຍ.

## ໝວດທີ 4
## ຂັ້ນຕອນ ການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່

### ມາດຕາ 14 ການສະເໜີອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມໃດໜຶ່ງ ຕ້ອງຍື່ນຄຳຮ້ອງ ຕາມແບບພິມທີ່ກຳນົດໄວ້ ພ້ອມທັງຄັດຕິດເອກະສານ ທີ່ກ່ຽວຂ້ອງຂອງປະເທດນຳເຂົ້າ ເຖິງ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເພື່ອພິຈາລະນາ ໃນກຳນົດເວລາ ດັ່ງນີ້:

- ສຳລັບສິນຄ້າ ທີ່ເຄີຍສົ່ງອອກມາກ່ອນ ຢ່າງໜ້ອຍ ສິບຫ້າວັນ ກ່ອນວັນສົ່ງອອກຕົວຈິງ;
- ສຳລັບສິນຄ້າ ທີ່ບໍ່ເຄີຍສົ່ງອອກມາກ່ອນ ຫຼື ສົ່ງອອກ ໄປປະເທດໃໝ່ ຫຼື ປະເທດ ທີ່ກຳນົດໄວ້ໃນບັນຊີຂອງອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ທີ່ມີຂໍ້ມູນບໍ່ທັນຈະແຈ້ງ ຫຼື ກໍລະນີອື່ນ ແມ່ນໃຊ້ເວລາເພີ່ມຕື່ມຕາມຄວາມເໝາະສົມ.

ຜູ້ສະເໜີ ຕ້ອງກຳນົດປະເພດ ແລະ ປະລິມານສິນຄ້າທີ່ຈະກວດກາ ພ້ອມທັງຂຽນຂໍ້ມູນອື່ນ ໃສ່ໃນແບບພິມ ຕາມບົດແນະນຳຂອງກົມປູກຝັງ ສ່ວນຄ່າໃຊ້ຈ່າຍໃນການລົງກວດກາພາກສະໜາມຕົວຈິງແມ່ນເປັນຄວາມຮັບຜິດຊອບຂອງຜູ້ສະເໜີ.

ຜູ້ສະເໜີ ຂໍການຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ທີ່ໄດ້ຂຶ້ນທະບຽນສະຖານທີ່ປະກອບການຜະລິດ ແລ້ວ ຕ້ອງສຳເນົາ ໃບທະບຽນສະຖານທີ່ປະກອບການຜະລິດ ແລະ ໃບຢັ້ງຢືນການກວດກາສະຖານທີ່ປະກອບການຜະລິດ ຄັດຕິດມາພ້ອມ.

ໃນກໍລະນີ ການຜະລິດ ແລະ ການສົ່ງອອກ ຢູ່ບັນດາແຂວງທີ່ຍັງບໍ່ທັນໄດ້ຮັບການມອບໝາຍສິດອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຈາກກົມປູກຝັງ ໃຫ້ສະເໜີ ເຖິງ ພະແນກກະສິກຳ ແລະ ປ່າໄມ້ ແຂວງຂອງຕົນ ເພື່ອພິຈາລະນາ ສົ່ງຕໍ່ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໃກ້ຄຽງ ທີ່ໄດ້ຮັບສິດ ຈາກກົມປູກຝັງ.

### ມາດຕາ 15 ຫຼັກການພິຈາລະນາ ອອກໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່

ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ພິຈາລະນາອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ຕາມແບບພິມ ຂອງ ກົມປູກຝັງ ບົນພື້ນຖານຫຼັກການ ດັ່ງນີ້:

1. ຖືກຕ້ອງຕາມຂໍ້ກຳນົດເງື່ອນໄຂ ຂອງປະເທດນຳເຂົ້າ;
2. ປອດສັດຕູພືດຕ້ອງຫ້າມ ຂອງປະເທດນຳເຂົ້າ;
3. ບໍ່ມີສິ່ງປົນເປື້ອນເກີນລະດັບທີ່ກຳນົດ ຂອງປະເທດນຳເຂົ້າ;
4. ບໍ່ມີວັດຖຸທີ່ຕ້ອງຫ້າມ ຂອງປະເທດນຳເຂົ້າ.

**ມາດຕາ 16 ການກວດກາ ແລະ ອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ**

ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງກວດກາເອກະສານ ແລະ ຊຸດສິນຄ້າ ເພື່ອອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ດັ່ງນີ້:

1. ຕ້ອງກວດກາເອກະສານ ພາຍໃນ ສອງ ວັນ ນັບແຕ່ວັນໄດ້ຮັບໃບສະເໜີ, ຖ້າເຫັນວ່າເອກະສານຄົບຖ້ວນ ຕ້ອງປະສານກັບຜູ້ສົ່ງອອກ ເພື່ອກຳນົດ ວັນ, ເວລາ ແລະ ສະຖານທີ່ ສຳລັບການກວດກາ;
2. ການກວດກາຊຸດສິນຄ້າ ແລະ ອອກໃບຢັ້ງຢືນສຸຂານາໄມພືດ ໃຊ້ເວລາທັງໝົດ ບໍ່ເກີນ ຫ້າວັນລັດຖະການ ນັບແຕ່ວັນລົງກວດກາຊຸດສິນຄ້າ, ຍົກເວັ້ນໄດ້ຮັບການສະເໜີຈາກຜູ້ສົ່ງອອກໃຫ້ເພີ່ມເວລາກວດກາຫຼາຍກວ່າເກົ່າ;
3. ທຸກການກວດກາ ຕ້ອງດຳເນີນຕາມຂັ້ນຕອນ ແລະ ວິທີການ ທີ່ກຳນົດໄວ້ ໂດຍເຈົ້າໜ້າທີ່ກັກກັນພືດ ຂອງ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕາມເວລາທາງລັດຖະການ, ໃນກໍລະນີມີການກວດກາເພີ່ມຕາມການສະເໜີຈາກຜູ້ສົ່ງອອກ, ຜູ້ສົ່ງອອກຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ;
4. ໃນກໍລະນີ ຕ້ອງມີການກວດກາຄືນໃໝ່, ອົງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ຕ້ອງອີງໃສ່ເຫດຜົນທາງວິທະຍາສາດ ໂດຍມີການປະສານງານກັບເຈົ້າຂອງຊຸດສິນຄ້າ ເພື່ອກຳນົດ ວັນ, ເວລາ ທີ່ຈະກວດຄືນໃໝ່ ພາຍຫຼັງການກວດກາເບື້ອງຕົ້ນ;
5. ໃນກໍລະນີ ການສົ່ງອອກ ວັດຖຸຕ້ອງຄວບຄຸມ ຈາກ ແຂວງທີ່ເປັນແຫຼ່ງກຳເນີດສິນຄ້າ ແລະ ຍັງບໍ່ທັນໄດ້ຮັບການມອບສິດ ອອກໃບຢັ້ງຢືນສຸຂານາໄມພືດ, ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ດັ່ງກ່າວ ເປັນຜູ້ດຳເນີນການກວດກາ ຈາກນັ້ນ ໃຫ້ນຳສົ່ງຕໍ່ ເຖິງ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຫຼື ດ່ານກັກກັນພືດ ໃກ້ຄຽງ ທີ່ໄດ້ຮັບການມອບສິດ ເພື່ອອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ;
6. ການກວດກາວັດຖຸຕ້ອງຄວບຄຸມເບື້ອງຕົ້ນແຕ່ລະຄັ້ງ ຂອງເຈົ້າໜ້າທີ່ກັກກັນພືດ ຕ້ອງເຮັດບົດບັນທຶກຜົນຂອງການກວດກາ ເປັນ ສອງ ສະບັບ ໂດຍເກັບຮັກສາໄວ້ ໜຶ່ງ ສະບັບ ແລະ ອີກໜຶ່ງ ສະບັບ ສົ່ງໃຫ້ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຫຼື ດ່ານກັກກັນພືດ ເພື່ອເປັນບ່ອນອີງ ໃນການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ;
7. ໃນກໍລະນີ ຊຸດສິນຄ້າຫາກສອດຄ່ອງຕາມຫຼັກການ ທີ່ກຳນົດໄວ້ໃນ ມາດຕາ 26 ຂອງຂໍ້ຕົກລົງສະບັບນີ້ ເຈົ້າໜ້າທີ່ກັກກັນພືດ ຕ້ອງລົງລາຍເຊັນໃສ່ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກພາຍໃນ ໜຶ່ງ ວັນ.

**ມາດຕາ 17 ເອກະສານ ສຳລັບ ການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ**

ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງນຳໃຊ້ແບບພິມ ໃບຢັ້ງຢືນສຸຂານາໄມພືດ ຂອງສົນທິສັນຍາປ້ອງກັນພືດສາກົນ (IPPC) ທີ່ກຳນົດໄວ້ໃນບົດແນະນຳຂອງກົມປູກຝັງ.

ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງພິມຂໍ້ຄວາມທີ່ຖືກຕ້ອງກັບຂໍ້ກຳນົດເງື່ອນໄຂ ຂອງປະເທດນຳເຂົ້າ.

**ມາດຕາ 18 ສິດ ແລະ ພັນທະຂອງຜູ້ສົ່ງອອກ ແລະ ຜູ້ສົ່ງອອກຕໍ່**

ຜູ້ສົ່ງອອກ ແລະ ຜູ້ສົ່ງອອກຕໍ່ ມີສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ສະເໜີຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບ ສົ່ງອອກ ແລະ ສົ່ງອອກຕໍ່ ພ້ອມທັງກຽມຊຸດສິນຄ້າ ສຳລັບການກວດກາ;

2. ປະຕິບັດຕາມຂັ້ນຕອນວິທີການຮັກສາຄວາມປອດໄພດ້ານສຸຂານາໄມພືດ ໃຫ້ສອດຄ່ອງກັບເງື່ອນໄຂຂອງປະເທດນຳເຂົ້າ;
3. ຮັບປະກັນບັນຊີພືດ ໃນແຕ່ລະຕູ້ບັນຈຸ ໃຫ້ຖືກຕ້ອງກັບປະເພດ, ຊະນິດ, ມາດຕະຖານຄຸນນະພາບ ຫຼື ຂໍ້ມູນອື່ນທີ່ແຈ້ງໄວ້ໃນໃບສະເໜີ;
4. ມີຕູ້ບັນຈຸນຳໃຊ້ໃນການຫຸ້ມຫໍ່ຜະລິດຕະພັນພືດ ທີ່ຖືກຕ້ອງຕາມຂໍ້ກຳນົດເງື່ອນໄຂຂອງປະເທດນຳເຂົ້າ ກ່ຽວກັບ ການຫຸ້ມຫໍ່;
5. ອຳນວຍຄວາມສະດວກ ໃຫ້ເຈົ້າໜ້າທີ່ກັກກັນພືດ ເຂົ້າກວດກາການຜະລິດ ລວມທັງ ສາງເກັບມ້ຽນ, ອຸປະກອນ, ເຄື່ອງໃຊ້ ແລະ ພື້ນທີ່ຕ່າງໆ ທີ່ໃຊ້ສຳລັບການຜະລິດ, ການອະນາໄມ, ການປຸງແຕ່ງ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການບຳບັດວັດຖຸຕ້ອງຄວບຄຸມ;
6. ສະໜອງແຮງງານ ໃນການເຄື່ອນຍ້າຍ, ການເປີດ ແລະ ການປິດ ພາຊະນະບັນຈຸ ພ້ອມທັງສະໜອງອຸປະກອນ, ເຄື່ອງມື ແລະ ແສງໄຟທີ່ຈຳເປັນ ໃຫ້ແກ່ການກວດກາ;
7. ໃຫ້ຄວາມຮ່ວມມືແກ່ ເຈົ້າໜ້າທີ່ກັກກັນພືດ ໃນການກວດກາ ແລະ ບັນທຶກຂໍ້ມູນ ດ້ານສຸຂານາໄມພືດ;
8. ມີເຄື່ອງມື, ສະຖານທີ່ ແລະ ວິທີກຳຈັດ ສິ່ງເສດເຫຼືອຈາກ ພືດ ແລະ ຜະລິດຕະພັນພືດ ທີ່ໄດ້ຮັບຮອງຈາກກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເພື່ອຮັບປະກັນໃຫ້ແກ່ ການກຳຈັດສິ່ງເສດເຫຼືອ.

**ມາດຕາ 19 ການບຳບັດ ກ່ອນການສົ່ງອອກ ແລະ ສົ່ງອອກຕໍ່**

ການບຳບັດ ກ່ອນການສົ່ງອອກ ແລະ ສົ່ງອອກຕໍ່ ສາມາດເຮັດໄດ້ ສອງກໍລະນີ ດັ່ງນີ້:

1. ໃນກໍລະນີ ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ ກຳນົດໃຫ້ມີການບຳບັດ ກ່ອນການສົ່ງອອກ ແລະ ສົ່ງອອກຕໍ່ ແຕ່ ສປປ ລາວ ບໍ່ມີຂໍ້ມູນລາຍລະອຽດ ກ່ຽວກັບມາດຕະການບຳບັດ ດັ່ງກ່າວ, ກົມປູກຝັງ ແລະ ພະແນກກະສິກຳ ຫຼື ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງນຳໃຊ້ມາດຕະການບຳບັດທີ່ມີໃນ ສປປ ລາວ;
2. ຖ້າມາດຕະຖານການບຳບັດ ທີ່ປະເທດນຳເຂົ້າມີຄວາມຕ້ອງການ ແຕ່ ສປປ ລາວ ບໍ່ສາມາດປະຕິບັດຕາມຂັ້ນຕອນດັ່ງກ່າວໄດ້, ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງສະເໜີປ່ຽນເປັນວິທີການບຳບັດອື່ນ ທີ່ ສປປ ລາວ ສາມາດປະຕິບັດໄດ້ໃຫ້ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ.

ໃນການບຳບັດຕາມຂໍ້ກຳນົດເງື່ອນໄຂ ຂອງປະເທດນຳເຂົ້າ ເຈົ້າໜ້າທີ່ກັກກັນພືດ ຕ້ອງປະຕິບັດຕາມວິທີການໃດໜຶ່ງ ດັ່ງນີ້:

1. ປະຕິບັດ ຕາມຂັ້ນຕອນ ດ້ານສຸຂານາໄມພືດທີ່ເໝາະສົມ (ບຳບັດວັດຖຸຕ້ອງຄວບຄຸມ ທີ່ຈະສົ່ງອອກ). ພ້ອມທັງໃຫ້ຜູ້ສົ່ງອອກ ຮັບຜິດຊອບຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;
2. ແຈ້ງໃຫ້ທຸລະກິດບໍລິການສຸຂານາໄມພືດ ທີ່ໄດ້ຂຶ້ນທະບຽນນຳກົມປູກຝັງ ເປັນຜູ້ດຳເນີນການບຳບັດແຕ່ຕ້ອງໄດ້ຜ່ານການຕິດຕາມຢັ້ງຢືນ ຈາກ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເພື່ອຮັບປະກັນໃຫ້ສອດຄ່ອງຕາມຂໍ້ກຳນົດເງື່ອນໄຂ ຂອງປະເທດນຳເຂົ້າ;
3. ໃນກໍລະນີທີ່ກວດພົບວ່າ ການບຳບັດທີ່ປະຕິບັດ ໂດຍ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຫຼື ພາກສ່ວນບໍລິການທຸລະກິດສຸຂານາໄມພືດ ບໍ່ໄດ້ຮັບຜົນສຳເລັດ, ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຫຼື ພາກສ່ວນບໍລິການທຸລະກິດສຸຂານາໄມພືດ ຕ້ອງດຳເນີນມາດຕະການສຸຂານາໄມພືດ ເພື່ອແກ້ໄຂບັນຫາດັ່ງກ່າວໃຫ້ທັນເວລາ.

**ມາດຕາ 20 ການສະເໜີຂໍການຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສະເໜີຂໍໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ຕ້ອງນຳໃຊ້ແບບພິມ ທີ່ ກົມປູກຝັງ ກຳນົດ.

**ມາດຕາ 21 ເງື່ອນໄຂສຳລັບການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່**

ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຈາກ ສປປ ລາວ ໄປຍັງປະເທດອື່ນ, ສຳລັບການສົ່ງອອກຕໍ່ ໂດຍທົ່ວໄປ ແມ່ນປະຕິບັດຕາມຂັ້ນຕອນ ທີ່ລະບຸໄວ້ໃນມາດຕາ 17, 18 ແລະ 19 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີທີ່ຊຸດສິນຄ້າໄດ້ຖືກແຍກອອກ, ປະສົມກັບຊຸດສິນຄ້າອື່ນ ຫຼື ຫຸ້ມຫໍ່ໃໝ່ ຕ້ອງປະຕິບັດ ຕາມເງື່ອນໄຂ ດັ່ງນີ້:

1. ການສົ່ງອອກຕໍ່ ວັດຖຸຕ້ອງຄວບຄຸມ ຕ້ອງສອດຄ່ອງກັບ ເງື່ອນໄຂຂອງປະເທດນຳເຂົ້າ;
2. ວັດຖຸຕ້ອງຄວບຄຸມ ຕ້ອງມີໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຕົ້ນສະບັບ ຊຶ່ງອອກໃຫ້ໂດຍປະເທດທີ່ເປັນແຫຼ່ງກຳເນີດສິນຄ້າ ຫຼື ປະເທດຕົ້ນທາງ;
3. ວັດຖຸຕ້ອງຄວບຄຸມ ໃຫ້ສາມາດຈຳແນກໄດ້ ແລະ ບໍ່ຢູ່ໃນສະພາບຄວາມສ່ຽງ ທີ່ກໍ່ໃຫ້ເກີດມີການຕິດແປດ ຫຼື ການປົນເປື້ອນສັດຕູພືດ ໃນຊ່ວງເວລາ ຊຸດສິນຄ້າຢູ່ໃນ ສປປ ລາວ.

ໃນກໍລະນີ ຊຸດສິນຄ້າໄດ້ແຍກອອກຈາກກັນ ຕ້ອງອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ພ້ອມທັງ ສຳເນົາໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕົ້ນສະບັບ ຂອງປະເທດຕົ້ນທາງ ເພື່ອນຳສົ່ງໄປພ້ອມກັບຊຸດສິນຄ້າດັ່ງກ່າວ.

ໃນກໍລະນີ ຊຸດສິນຄ້າທີ່ນຳເຂົ້າມາຍັງ ສປປ ລາວ ແລະ ມີຈຸດປະສົງສົ່ງອອກຕໍ່, ກົມປູກຝັງ ຫຼື ພະແນກກະສິກຳ ຫຼື ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງອອກໃບຢັ້ງຢືນຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ຕາມກໍລະນີ ດັ່ງນີ້:

1. ຊຸດສິນຄ້າ ມີການຕິດແປດ ປົນເປື້ອນສັດຕູພືດ ຫຼື ສູນເສຍ ຄວາມຄົບຖ້ວນ ຫຼື ໄດ້ຜ່ານການປຸງແຕ່ງ ເຮັດໃຫ້ປ່ຽນແປງຈາກສະພາບເດີມ ຈາກຂໍ້ມູນຂອງປະເທດແຫຼ່ງກຳເນີດຂອງຊຸດສິນຄ້າ ຕ້ອງໄດ້ລະບຸໄວ້ໃນໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕໍ່;
2. ພືດທີ່ນຳເຂົ້າມາປູກ ໜຶ່ງລະດູການ ໃນ ສປປ ລາວ ໃຫ້ຖືວ່າມີການປ່ຽນແປງແຫຼ່ງກຳເນີດຂອງສິນຄ້າ ແລະ ຕ້ອງກຳນົດໃຫ້ເປັນແຫຼ່ງກຳເນີດໃໝ່.

ໃນກໍລະນີ ປະເທດປາຍທາງ ຫາກໄດ້ກຳນົດເງື່ອນໄຂສະເພາະ ເປັນຕົ້ນ ການກວດກາສວນປູກທີ່ບໍ່ສາມາດດຳເນີນການໄດ້ ໂດຍຝ່າຍລາວທີ່ເປັນປະເທດສົ່ງອອກຕໍ່, ເງື່ອນໄຂສະເພາະດັ່ງກ່າວ ບໍ່ໄດ້ແຈ້ງໃນໃບຢັ້ງຢືນສຸຂານາໄມພືດສຳລັບສົ່ງອອກຕົ້ນສະບັບ ຫຼື ຫ້ອງວິໄຈທີ່ບໍ່ຖືກຮັບຮອງຈາກປະເທດປາຍທາງ, ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່. ໃນກໍລະນີ ສະພາບການດັ່ງກ່າວ ເກີດຂຶ້ນເປັນປົກກະຕິ, ກົມປູກຝັງຕ້ອງເຈລະຈາກ້າວໄປເຖິງສ້າງຂໍ້ຕົກລົງຮ່ວມກັບ ປະເທດແຫຼ່ງກຳເນີດສິນຄ້າ ແລະ ປະເທດນຳເຂົ້າ ເພື່ອຫາວິທີແກ້ໄຂຮ່ວມກັນ.

**ມາດຕາ 22 ການປ່ຽນໃໝ່, ຍົກເລີກ ແລະ ຢັ້ງຢືນສຳເນົາ ໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່**

ສຳລັບການປ່ຽນແປງໃໝ່, ຍົກເລີກ ແລະ ຢັ້ງຢືນຄືນ ສາມາດປະຕິບັດໄດ້ ຕາມກໍລະນີ ລຸ່ມນີ້:

1. ໃນກໍລະນີ ໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ຖືກເສຍຫາຍ ຫຼື ຖືກທຳລາຍ, ເປື້ອນ ຊຶ່ງບໍ່ສາມາດນຳໃຊ້ໄດ້, ຜູ້ສົ່ງອອກ ຫຼື ຜູ້ສົ່ງອອກຕໍ່ ຕ້ອງສະເໜີ ເຖິງ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕາມແບບພິມ ທີ່ກຳນົດໄວ້ໃນບົດແນະນຳ ຂອງກົມປູກຝັງ ເພື່ອອອກໃບຢັ້ງຢືນສຸຂານາໄມ

ພືດ ສຳລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ສະບັບໃໝ່ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

2. ກໍລະນີ ຜູ້ສົ່ງອອກ ມີຈຸດປະສົງ ຢັ້ງຢືນສຳເນົາ ໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ຍ້ອນປະເທດນຳເຂົ້າຕ້ອງການ, ໃຫ້ສະເໜີ ເຖິງ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໂດຍນຳໃຊ້ແບບພິມ ທີ່ກຳນົດໄວ້ໃນບົດແນະນຳເພື່ອຈ້ຳຕາປະທັບຢັ້ງຢືນ ຂອງອົງການປ້ອງກັນພືດແຫ່ງຊາດ (NPPO) ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

3. ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີສິດຍົກເລີກ ໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ໃນກໍລະນີ ຖືກແຈ້ງເຕືອນຈາກປະເທດນຳເຂົ້າ, ພົບວ່າ ຜູ້ສົ່ງອອກບໍ່ປະຕິບັດ ຕາມຂໍ້ກຳນົດເງື່ອນໄຂທີ່ວາງໄວ້ ຫຼື ຊຸດສິນຄ້າມີການປ່ຽນແປງ ຫຼື ມີຄວາມສູນເສຍສະພາບຄວາມຄົບຖ້ວນ ຕາມທີ່ໄດ້ລະບຸໄວ້ ໃນໃບຢັ້ງຢືນສຸຂານາໄມພືດ ສຳລັບການສົ່ງອອກ ແລະ ສົ່ງອອກຕໍ່.

**ມາດຕາ 23 ສິນຄ້າທີ່ບໍ່ສອດຄ່ອງຕາມຂໍ້ກຳນົດເງື່ອນໄຂສຸຂານາໄມພືດ ຂອງປະເທດນຳເຂົ້າ**

ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ສະເໜີຂໍການຢັ້ງຢືນສຸຂານາໄມພືດ ຫາກບໍ່ຖືກຕ້ອງຕາມເງື່ອນໄຂຂອງປະເທດນຳເຂົ້າ, ເຈົ້າໜ້າທີ່ກັກກັນພືດ ຕ້ອງປະຕິເສດການອອກ ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ພ້ອມທັງ ແຈ້ງເປັນລາຍລັກອັກສອນ ເຖິງຜູ້ສົ່ງອອກ ເພື່ອກຳນົດມາດຕະການແກ້ໄຂ.

ໃນກໍລະນີ ຫາກມີການກຳນົດມາດຕະການແກ້ໄຂ, ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງສະໜອງຂໍ້ມູນໃຫ້ແກ່ຜູ້ສົ່ງອອກ ກ່ຽວກັບ ກິດຈະກຳສຳລັບການບຳບັດທີ່ນຳໃຊ້ ຫຼື ອາດຈັດຕັ້ງປະຕິບັດ ການບຳບັດ ທີ່ຈຳເປັນດ້ວຍຕົນເອງ, ພາຍຫຼັງການບຳບັດຫາກພົບເຫັນ ວັດຖຸຕ້ອງຄວບຄຸມ ມີຄວາມສອດຄ່ອງຕາມເງື່ອນໄຂຂອງປະເທດນຳເຂົ້າ, ເຈົ້າໜ້າທີ່ກັກກັນພືດ ຕ້ອງອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່.

**ມາດຕາ 24 ມາດຕະການປະຕິບັດ ສຳລັບການສົ່ງອອກທີ່ບໍ່ສອດຄ່ອງ**

ໃນກໍລະນີ ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ ໄດ້ແຈ້ງເຕືອນຢ່າງເປັນທາງການ ກ່ຽວກັບ ຂໍ້ບົກຜ່ອງທີ່ບໍ່ສອດຄ່ອງ ໃນການຢັ້ງຢືນສຸຂານາໄມພືດ, ກົມປູກຝັງ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງໃຫ້ຜູ້ສົ່ງອອກຊາບ ກ່ຽວກັບ ການແຈ້ງເຕືອນຂອງປະເທດປາຍທາງ;
2. ດຳເນີນການກວດສອບຫາສາເຫດ ຕໍ່ກັບກໍລະນີດັ່ງກ່າວ ຖ້າອົງການປ້ອງການພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ ມີການຮ້ອງຂໍເອກະສານບົດລາຍງານຜົນຂອງການກວດສອບ ແລະ ມາດຕະການວິທີການແກ້ໄຂ ຂອງຜູ້ສົ່ງອອກ, ກົມປູກຝັງ ຕ້ອງສະໜອງສຳເນົາເອກະສານດັ່ງກ່າວໃຫ້ຢ່າງຄົບຊຸດ;
3. ໂຈະໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ, ສະເພາະສະຖານທີ່ປະກອບການຜະລິດ ຈະຖືກແຈ້ງເຕືອນຈາກປະເທດນຳເຂົ້າ ເປັນເວລາ ສິບຫ້າ ວັນ.

ການກວດກາ ຊຸດສິນຄ້າກ່ອນການສົ່ງອອກ ໃຫ້ປະຕິບັດ ດັ່ງນີ້:

- ຫາກກວດພົບສັດຕູພືດກັກກັນ ໃນເວລາການກວດກາຊຸດສິນຄ້າກ່ອນສົ່ງອອກ ແລະ ບໍ່ທັນມີການແຈ້ງເຕືອນຈາກປະເທດນຳເຂົ້າ ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ,

ນະຄອນຫຼວງ ຕ້ອງແຕ່ງຕັ້ງເຈົ້າໜ້າທີ່ກັກກັນພືດ ເພື່ອຄວບຄຸມ, ຄັດແຍກ ແລະ ກວດກາ ວັດຖຸຕ້ອງຄວບຄຸມ ຢູ່ສະຖານທີ່ຫຸ້ມຫໍ່ ຂອງຜູ້ສົ່ງອອກ;

- ຖ້າກວດພົບສັດຕູພືດກັກກັນ ຢ່າງຕໍ່ເນື່ອງພາຍໃນ ສາມສິບ ວັນ ນັບແຕ່ວັນກວດພົບຄັ້ງທໍາອິດ ໃຫ້ໂຈະໃບຢັ້ງຢືນສຸຂານາໄມພືດ ສໍາລັບການສົ່ງອອກ ຈາກສະຖານທີ່ປະກອບການຜະລິດ ເປັນເວລາ ສິບຫ້າ ວັນ ເພື່ອດໍາເນີນການສືບສວນ ໂດຍ ກົມປູກຝັງ ແລະ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ.

ການໂຈະໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ ສາມາດສືບຕໍ່ໄດ້ອີກ ຢ່າງໜ້ອຍ ສິບຫ້າ ວັນ ແລະ ປະຕິບັດໄປຈົນກວ່າ ສາມາດກວດກາເຫັນວ່າ ມາດຕະການແກ້ໄຂຂອງຜູ້ສົ່ງອອກ ໄດ້ຖືກຈັດຕັ້ງປະຕິບັດຮຽບຮ້ອຍ ແລະ ຊຸດສິນຄ້າສົ່ງອອກ ບໍ່ມີການຕິດແປດສັດຕູພືດກັກກັນ.

### ມາດຕາ 25 ມາດຕະການຕໍ່ຜູ້ລະເມີດ ທີ່ບໍ່ຮ້າຍແຮງ

ຜູ້ສົ່ງອອກ ທີ່ລະເມີດລະບຽບການສຸຂານາໄມພືດ ທີ່ມີລັກສະນະບໍ່ຮ້າຍແຮງ ໃຫ້ປະຕິບັດມາດຕະການ ດັ່ງນີ້:

1. ຫາກພົບເຫັນວັດຖຸຕ້ອງຄວບຄຸມ ຫຼື ວັດຖຸອື່ນ ທີ່ບໍ່ໄດ້ແຈ້ງໃນໃບສະເໜີຂໍໃບຢັ້ງຢືນສຸຂາໄມພືດ ສໍາລັບສົ່ງອອກ ຫຼື ສົ່ງອອກຕໍ່ ເຊັ່ນ: ປະລິມານ, ນໍ້າໜັກ ແລະ ຂໍ້ມູນລາຍລະອຽດຕົວຈິງ ບໍ່ຖືກຕ້ອງກັບຂໍ້ມູນທີ່ຂຽນໄວ້ໃນໃບສະເໜີຂອງຜູ້ສົ່ງອອກ, ເຈົ້າໜ້າທີ່ກັກກັນພືດ ຕ້ອງແຈ້ງໃຫ້ຜູ້ສົ່ງອອກຊາບ ກ່ຽວກັບ ສິ່ງທີ່ຕົນເອງພົບ, ຫຼັງຈາກນັ້ນ ຜູ້ສົ່ງອອກຕ້ອງຈໍາແນກ ແລະ ຄັດແຍກວັດຖຸ ທີ່ບໍ່ໄດ້ແຈ້ງ ຫຼື ບໍ່ຖືກຕ້ອງກັບໃບສະເໜີ ສໍາລັບຊຸດສິນຄ້າ. ເມື່ອຊຸດສິນຄ້າໄດ້ຄັດແຍກ ແລະ ຖືກຕ້ອງ ຕາມຂໍ້ກໍານົດເງື່ອນໄຂຂອງປະເທດນໍາເຂົ້າ ແລ້ວ, ເຈົ້າໜ້າທີ່ກັກກັນພືດ ຕ້ອງອອກໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ ແລະ ໃບຢັ້ງຢືນສຸຂານາໄມພືດສໍາລັບສົ່ງຕໍ່ ທັນທີ;
2. ມີການລະເມີດ ເປັນຄັ້ງທີ່ສອງ ຊຶ່ງມີສາເຫດດຽວກັນກັບ ຂໍ້ທີ 1 ຂອງມາດຕານີ້ ພາຍໃນສາມສິບ ວັນ ຈາກຄັ້ງທໍາອິດ, ກົມປູກຝັງ ແລະ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກຕໍ່ ແລະ ໃຫ້ຜູ້ສົ່ງອອກຍື່ນໃບສະເໜີຄືນໃໝ່. ຫຼັງຈາກນັ້ນໃຫ້ມີການກວດກາ ແລະ ຢັ້ງຢືນຕິດຕໍ່ກັນ ຫ້າ ຄັ້ງ ເປັນເວລາຢ່າງໜ້ອຍ ສາມ ເດືອນ ໂດຍໃຫ້ກວດກາທຸກຄອນເທນເນີ ສໍາລັບການສົ່ງອອກ;
3. ຖ້າມີການລະເມີດ ຕິດຕໍ່ກັນ ສິບ ຄັ້ງ ເປັນເວລາ ສາມ ເດືອນ ຕາມທີ່ກໍານົດໄວ້ໃນ ຂໍ້ທີ 2 ຂອງມາດຕານີ້, ກົມປູກຝັງ ແລະ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງປະຕິເສດການອອກໃບຢັ້ງຢືນສຸຂານາໄມພືດສໍາລັບສົ່ງອອກ ແລະ ໃບຢັ້ງຢືນສຸຂານາໄມພືດສໍາລັບສົ່ງອອກຕໍ່ ພ້ອມທັງ ປັບໃໝຕາມກົດໝາຍ.

### ມາດຕາ 26 ການກວດກາຄືນໃໝ່

ເຈົ້າໜ້າທີ່ກັກກັນພືດ ສາມາດກວດກາຊຸດສິນຄ້າຄືນໃໝ່ ໃນກໍລະນີ ດັ່ງນີ້:

1. ໄລຍະ ການກວດກາ ແລະ ການສົ່ງອອກ ເກີນ ສິບສີ່ວັນ, ສັ້ນ ຫຼື ຍາວກວ່າ ທີ່ປະເທດນໍາເຂົ້າອະນຸຍາດໃຫ້;
2. ວັດຖຸຕ້ອງຄວບຄຸມຖືກປະຕິເສດ ການຢັ້ງຢືນສຸຂານາໄມພືດ ຈາກເຈົ້າໜ້າທີ່ກັກກັນພືດ, ຜູ້ສົ່ງອອກ ສາມາດຍື່ນຄໍາຮ້ອງຂໍການກວດກາຄືນໃໝ່ ເພື່ອດໍາເນີນການບໍາບັດ ຕາມຂັ້ນຕອນທີ່ກົມປູກຝັງກໍານົດ.

**ມາດຕາ 27 ການເກັບຮັກສາເອກະສານ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ຢ່າງໜ້ອຍ ຫ້າປີ ຊຶ່ງລວມມີເອກະສານ ດັ່ງນີ້:

1. ຂັ້ນຕອນ ການຈັດຕັ້ງປະຕິບັດໃນການຢັ້ງຢືນສຸຂານາໄມພືດ;
2. ປຶດບັນທຶກ ແລະ ເອກະສານອື່ນ ກ່ຽວກັບການ ກວດກາ, ເກັບຕົວຢ່າງ, ທົດສອບ, ບຳບັດ ແລະ ຄວາມຖືກຕ້ອງຄົບຖ້ວນ ຂອງຊຸດສິນຄ້າ;
3. ເກັບກຳປະຫວັດຜູ້ທີ່ເຮັດໜ້າທີ່ ແລະ ຮັບຜິດຊອບກິດຈະກຳຕ່າງໆ ຕາມຂໍ້ທີ່ 2 ຂອງມາດຕານີ້;
4. ຊື່ ແລະ ທີ່ຢູ່ຂອງ ເຈົ້າຂອງສະຖານທີ່ປະກອບການຜະລິດ, ຜູ້ສົ່ງອອກ ແລະ ຜູ້ດຳເນີນທຸລະກິດບໍລິການສຸຂານາໄມພືດ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ;
5. ວັນ, ເດືອນ, ປີ ຂອງການຂົນສົ່ງ ແລະ ການປະຕິບັດງານ;
6. ຂໍ້ມູນທີ່ກ່ຽວຂ້ອງກັບ ການກວດສອບຍ້ອນຫຼັງ ເປັນຕົ້ນ ຂໍ້ມູນການຈຳແນກປະເພດ ແລະ ຂໍ້ມູນຄວາມປອດໄພດ້ານສຸຂານາໄມພືດ ຂອງຊຸດສິນຄ້າ ສຳລັບສົ່ງອອກ;
7. ຂໍ້ມູນດ້ານສຸຂານາໄມພືດອື່ນທີ່ກ່ຽວຂ້ອງ.

ສຳລັບ ສຳເນົາໃບຢັ້ງຢືນສຸຂານາໄມພືດ ຕ້ອງເກັບຮັກສາໄວ້ ເປັນເວລາ ສອງປີ ຢູ່ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເພື່ອຮັບປະກັນປົກປ້ອງຂໍ້ມູນຂອງຜູ້ສົ່ງອອກ ໃຫ້ເປັນຄວາມລັບ.

**ມາດຕາ 28 ການກວດກາຮ່ວມກັນກັບຄູ່ການຄ້າ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ສາມາດຮ່ວມມື ກ່ຽວກັບການກວດກາ ດ້ານສຸຂານາໄມພືດ ຮ່ວມກັບພາກພື້ນ ແລະ ສາກົນ ບົນພື້ນຖານການຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

## ໝວດທີ 5
## ການຫຸ້ມຫໍ່ ແລະ ການປະກອບຂໍ້ມູນໃນສະຫຼາກ

**ມາດຕາ 29 ການຫຸ້ມຫໍ່**

ການຫຸ້ມຫໍ່ ວັດຖຸຕ້ອງຄວບຄຸມ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຮັບປະກັນ ບໍ່ເຮັດໃຫ້ເກີດຄວາມສ່ຽງ ຕໍ່ ຄວາມຖືກຕ້ອງຄົບຖ້ວນດ້ານສຸຂານາໄມພືດ ຂອງສິນຄ້າ ແລະ ປົກປ້ອງສິນຄ້າຈາກສັດຕູພືດ ຫຼື ສິ່ງປົນເປື້ອນ;
2. ມີຄວາມ ແຂງແກ່ນ ແລະ ທົນທານ ຕໍ່ການເຄື່ອນຍ້າຍ ແລະ ຂົນສົ່ງ ໃຫ້ຮອດເປົ້າໝາຍ;
3. ສາມາດ ອະນາໄມ ແລະ ນຳໃຊ້ໄດ້ຫຼາຍຄັ້ງ ໂດຍໄດ້ຮັບອະນຸຍາດ ຈາກກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ.

ສຳລັບວັດຖຸຫຸ້ມຫໍ່ ທີ່ເຮັດດ້ວຍໄມ້ ໃຫ້ປະຕິບັດຕາມມາດຕະການ ດັ່ງນີ້:

- ກົມປູກຝັງ ຕ້ອງກຳນົດມາດຕະການບຳບັດດ້ານສຸຂານາໄມພືດ ສຳລັບວັດຖຸຫຸ້ມຫໍ່ ທີ່ເຮັດດ້ວຍໄມ້ ພ້ອມທັງປັບປຸງ ໃຫ້ທັນສະພາບການ;
- ວັດຖຸຫຸ້ມຫໍ່ທີ່ເຮັດດ້ວຍໄມ້ ທີ່ໄດ້ຜ່ານການບຳບັດດ້ານສຸຂານາໄມພືດ ຕ້ອງຈ້ຳກາ ເພື່ອຢັ້ງຢືນຕາມມາດຕະຖານສາກົນ ດ້ານສຸຂານາໄມພືດ ເລກທີ 15 (ISPM No.15);
- ການບຳບັດ ຫຼື ນຳໃຊ້ກາຈ້ຳ ແມ່ນອົງການຈັດຕັ້ງໃດໜຶ່ງ ທີ່ບໍ່ສັງກັດໃນກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຜູ້ປະຕິບັດ ພາຍໃຕ້ການຄຸ້ມຄອງ,

ກວດສອບ ແລະ ປະເມີນຜົນ ຈາກກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ.

**ມາດຕາ 30 ການຕິດສະຫຼາກ**

ການສົ່ງອອກ ວັດຖຸຕ້ອງຄວບຄຸມ ຕ້ອງຕິດສະຫຼາກ ໂດຍມີເນື້ອໃນຖືກຕ້ອງ ແລະ ຊັດເຈນ, ກຳນົດຮູບແບບໃດໜຶ່ງທີ່ສາມາດ ຈຳແນກ ແລະ ກວດສອບຍ້ອນຫຼັງຄືນໄດ້ ພ້ອມທັງ ຖືກຕ້ອງຕາມຂໍ້ກຳນົດເງື່ອນໄຂ ການຕິດສະຫຼາກຂອງປະເທດນຳເຂົ້າ.

**ມາດຕາ 31 ການປິດສິ່ງຫຸ້ມຫໍ່**

ພາຍຫຼັງການກວດກາ ແລະ ອອກໃບຢັ້ງຢືນສຸຂານາໄມພືດ, ເຈົ້າໜ້າທີ່ກັກກັນພືດ ຕ້ອງປິດຕູ້ຄອນເທນເນີ ຫຼື ສິ່ງຫຸ້ມຫໍ່ ດ້ວຍເຄື່ອງໝາຍ ຂອງອົງການປ້ອງກັນພືດແຫ່ງຊາດ (NPPO). ໂດຍມີເລກທີ ເພື່ອພິສູດ ແລະ ສາມາດກວດສອບຍ້ອນຫຼັງ.

## ໝວດທີ 6
## ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດ ກ່ອນການສົ່ງອອກ

**ມາດຕາ 32 ການເກັບຮັກສາ ແລະ ການຂົນສົ່ງ**

ວັດຖຸຕ້ອງຄວບຄຸມທີ່ ສະເໜີຂໍຢັ້ງຢືນສຸຂານາໄມພືດສຳລັບການສົ່ງອອກ ແລະ ສົ່ງອອກຕໍ່ ຕ້ອງເກັບມ້ຽນໄວ້ ໃນສະຖານທີ່ປະກອບການຜະລິດທີ່ໄດ້ຂຶ້ນທະບຽນ ແລະ ສະຖານທີ່ອື່ນ ທີ່ຮັບຮອງ ໂດຍກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຈົນກວ່າຊຸດສິນຄ້າດັ່ງກ່າວກຽມພ້ອມຈະຂົນສົ່ງ.

ວັດຖຸຕ້ອງຄວບຄຸມ ຕ້ອງຂົນສົ່ງຈາກສະຖານທີ່ປະກອບການຜະລິດ ຊຶ່ງເປັນສະຖານທີ່ດຳເນີນການຢັ້ງຢືນສຸຂານາໄມພືດ, ເປັນເສັ້ນທາງທີ່ສັ້ນ ແລະ ມີຄວາມປອດໄພ ທາງດ້ານສຸຂານາໄມພືດ ເຮັດໃຫ້ຮັບເອົາສິນຄ້າໄດ້ໄວ ຢູ່ດ່ານສົ່ງອອກ.

ສາງສິນຄ້າ ປະຈຳດ່ານ ຫຼື ພາຫະນະຂົນສົ່ງ ຕ້ອງສອດຄ່ອງ ຕາມຂໍ້ກຳນົດເງື່ອນໄຂທີ່ກຳນົດໄວ້ ໂດຍອີງການຄຸ້ມຄອງວຽກງານປ້ອງກັນ ແລະ ກັກກັນພືດ ເພື່ອຮັບປະກັນ ການຮັກສາຄຸນລັກສະນະຂອງສິນຄ້າ ແລະ ຄວາມຖືກຕ້ອງຄົບຖ້ວນ ທາງດ້ານສຸຂານາໄມພືດ ພາຍຫຼັງການຢັ້ງຢືນສຸຂານາໄມພືດ ຈົນກວ່າຊຸດສິນຄ້າຖືກສົ່ງອອກ.

**ມາດຕາ 33 ການອະນຸຍາດສຳລັບຕູ້ຄອນເທນເນີ ແລະ ການຂົນສົ່ງ ທີ່ບໍ່ນຳໃຊ້ຕູ້ຄອນເທນເນີ**

ໃນກໍລະນີປະເທດນຳເຂົ້າ ກຳນົດໃຫ້ມີການອະນຸຍາດ ດ້ານສຸຂານາໄມພືດ ສຳລັບ ການຂົນສົ່ງໃສ່ຕູ້ຄອນເທນເນີ ແລະ ບໍ່ນຳໃຊ້ຕູ້ຄອນເທນເນີ ເປັນຕົ້ນ ຕູ້ຄອນເທນເນີຄ່ຽນຖ່າຍ, ເຄື່ອງປັບອາກາດ, ຕູ້ແຊ່ເຢັນ, ຕູ້ຄອນເທນເນີຂົນສົ່ງທາງອາກາດ, ຜູ້ສົ່ງອອກ ແລະ ສົ່ງອອກຕໍ່ ຕ້ອງສະເໜີຕໍ່ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເພື່ອແຕ່ງຕັ້ງເຈົ້າໜ້າທີ່ກັກກັນພືດ ລົງກວດກາ ບົນພື້ນຖານຫຼັກການດ້ານສຸຂານາໄມພືດ ດັ່ງນີ້:

1. ໃຊ້ວັດສະດຸປົກປິດ ທີ່ສະອາດ ບໍ່ມີຄວາມສ່ຽງຕໍ່ການຕິດແປດ ແລະ ປົນເປື້ອນ ໃນວັດຖຸຕ້ອງຄວບຄຸມ;
2. ຊຸດສິນຄ້າທີ່ບັນຈຸໃນຕູ້ຄອນເທນເນີ ຕ້ອງປາສະຈາກ ການຕິດແປດສັດຕູພືດຄວບຄຸມ;
3. ຕູ້ຄອນເທນເນີ ຕ້ອງບໍ່ຢູ່ໃນສະພາບ ທີ່ກໍ່ໃຫ້ມີການຕິດແປດ ຫຼື ປົນເປື້ອນ ໃນຊຸດສິນຄ້າ.

ພາຍຫຼັງ ເຈົ້າໜ້າທີ່ກັກກັນພືດ ກວດກາຕູ້ຄອນເທນເນີ ຫຼື ການຂົນສົ່ງທີ່ບໍ່ນຳໃຊ້ຕູ້ຄອນເທນເນີ ເຫັນວ່າສອດຄ່ອງກັບຫຼັກການສຸຂານາໄມພືດ ແລ້ວ, ເຈົ້າໜ້າທີ່ກັກກັນພືດ ຕ້ອງອອກໃບອະນຸຍາດຕາມ

ແບບພິມ ທີ່ກົມປູກຝັງກຳນົດ ຫຼື ປະຕິເສດການອອກໃບອະນຸຍາດ ໃນກໍລະນີເຫັນວ່າ ຕູ້ຄອນເທນເນີ ຫຼື ການຂົນສົ່ງບໍ່ນຳໃຊ້ຕູ້ຄອນເທນເນີ ບໍ່ສອດຄ່ອງກັບຫຼັກການທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້.

## ມາດຕາ 34 ການຈັດສົ່ງຊຸດສິນຄ້າ

ການຈັດສົ່ງຊຸດສິນຄ້າ ທີ່ຈະສົ່ງອອກ ແລະ ສົ່ງອອກຕໍ່ ຕ້ອງບັນຈຸໃສ່ຕູ້ຄອນເທນເນີ ຢູ່ສະຖານທີ່ປະກອບການຜະລິດ ທີ່ມີເຈົ້າໜ້າທີ່ກັກກັນພືດ ແລະ ເຈົ້າໜ້າທີ່ພາສີ ໃນກໍລະນີຈຳເປັນ.

ເຈົ້າຂອງ ຫຼື ຜູ້ດຳເນີນງານ ຂອງສະຖານທີ່ປະກອບການຜະລິດ, ພາຫະນະຂົນສົ່ງລະຫວ່າງປະເທດ ທີ່ນຳໃຊ້ເພື່ອສົ່ງອອກວັດຖຸຕ້ອງຄວບຄຸມ ຕ້ອງອະນຸຍາດໃຫ້ ພະນັກງານ ຫຼື ເຈົ້າໜ້າທີ່ກັກກັນພືດເຂົ້າໄປກວດສະຖານທີ່ປະກອບການຜະລິດ ຫຼື ພາຫະນະຂົນສົ່ງ ດັ່ງນີ້:

1. ສະຖານທີ່ເກັບມ້ຽນວັດຖຸຕ້ອງຄວບຄຸມ ທີ່ລໍຖ້າການສົ່ງອອກ ແລະ ສົ່ງອອກຕໍ່;
2. ສະຖານທີ່ໃກ້ຄຽງ ທີ່ມີຄວາມສ່ຽງຕໍ່ການຕິດແປດ ຫຼື ປົນເປື້ອນສັດຕູພືດ ໃນຊຸດສິນຄ້າ;
3. ສາງສິນຄ້າ ປະຈຳດ່ານ ແລະ ພາຫານະຂົນສົ່ງຊຸດສິນຄ້າ ເພື່ອການສົ່ງອອກ.

ໃນກໍລະນີຕູ້ຄອນເທນເນີ ຫຼື ການຂົນສົ່ງທີ່ບໍ່ນຳໃຊ້ຕູ້ຄອນເທນເນີ ທີ່ຜ່ານການກວດກາ ແລະ ໄດ້ຮັບອະນຸຍາດແລ້ວ ແຕ່ຍັງບໍ່ໄດ້ຂົນສົ່ງ, ພະນັກງານ ຫຼື ເຈົ້າໜ້າທີ່ກັກກັນພືດ ຂອງກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງປິດຕູ້ຄອນເທນເນີໄວ້ ດ້ວຍເຄື່ອງໝາຍຂອງອົງການປ້ອງກັນພືດແຫ່ງຊາດ.

ສຳລັບຕູ້ຄອນເທນເນີ ຫຼື ການຂົນສົ່ງ ທີ່ບໍ່ນຳໃຊ້ຕູ້ຄອນເທນເນີ ທີ່ມີສິນຄ້າຫຼາຍປະເພດປົນກັນ ແລະ ສິນຄ້າກຳນົດສະເພາະ ຕ້ອງຫຸ້ມຫໍ່, ຕິດກາໝາຍ ແລະ ແຍກອອກຈາກຊຸດສິນຄ້າປະເພດອື່ນໃນຕູ້ຄອນເທນເນີ ຕາມກົມປູກຝັງກຳນົດ. ຕາປະທັບ ຫຼື ເຄື່ອງໝາຍ ຕ້ອງຕິດໃສ່ແຕ່ປະເພດສິນຄ້າ ທີ່ໄດ້ຮັບການຢັ້ງຢືນແລ້ວ ເພື່ອສົ່ງໃຫ້ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນຳເຂົ້າ ສາມາດຈຳແນກປະເພດ ແລະ ແຫຼ່ງທີ່ມາຂອງຊຸດສິນຄ້າ.

## ມາດຕາ 35 ການກຳນົດດ່ານສົ່ງອອກ

ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຜູ້ກຳນົດດ່ານສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃນໃບຢັ້ງຢືນສຸຂານາໄມພືດ ຕາມເງື່ອນໄຂດ້ານສຸຂານາໄມພືດຂອງປະເທດນຳເຂົ້າ.

## ມາດຕາ 36 ການກວດສອບຍ້ອນຫຼັງ

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ສາມາດກວດສອບຍ້ອນຫຼັງແຫຼ່ງທີ່ມາຂອງຊຸດສິນຄ້າ ໂດຍເລີ່ມຈາກຂະບວນການ ປູກ, ເກັບກ່ຽວ ແລະ ຂົນສົ່ງເຖິງດ່ານສົ່ງອອກ. ໃນກໍລະນີໄດ້ຮັບແຈ້ງ ກ່ຽວກັບ ຄວາມບໍ່ຖືກຕ້ອງ ດ້ານສຸຂານາໄມພືດ ຈາກປະເທດປາຍທາງ, ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງດຳເນີນການກວດສອບຍ້ອນຫຼັງ ເຖິງແຫຼ່ງທີ່ມາຂອງຊຸດສິນຄ້າດັ່ງກ່າວ.

ຜູ້ສົ່ງອອກ ຕ້ອງເກັບຮັກສາ ແລະ ບັນທຶກຂໍ້ມູນ ກ່ຽວກັບ ຜົນຂອງການກວດສອບຍ້ອນຫຼັງ ແລະ ເອກະສານທີ່ກ່ຽວຂ້ອງກັບການຜະລິດ, ການຈັດການຫຼັງການເກັບກ່ຽວ ແລະ ການຂົນສົ່ງ.

## ໝວດທີ 7
## ຂໍ້ຫ້າມ

### ມາດຕາ 37 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຈາກພື້ນທີ່ທີ່ມີການລະບາດຂອງສັດຕູພືດ ໄປພື້ນທີ່ອື່ນຢູ່ພາຍໃນປະເທດ;
2. ສົ່ງອອກ ແລະ ສົ່ງຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ບໍ່ສອດຄ່ອງກັບລະບຽບການ ດ້ານສຸຂານາໄມພືດ ຂອງປະເທດນໍາເຂົ້າ;
3. ດໍາເນີນທຸລະກິດ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດ;
4. ອອກໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກຕໍ່ ໂດຍບໍ່ໄດ້ຮັບມອບໝາຍ;
5. ໃຫ້ສິນບົນ, ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງແກ່ ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ, ປອມແປງເອກະສານ ແລະ ປະທັບຕາ ກ່ຽວກັບ ການປ້ອງກັນ ແລະ ກັກກັນພືດ;
6. ນາບຂູ່, ກີດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ;
7. ໂຄສະນາ ກ່ຽວກັບວຽກງານສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເກີນຄວາມເປັນຈິງ;
8. ຫຼຸດ ຫຼື ເພີ່ມ ປະລິມານຊຸດສິນຄ້າ ຫຼື ປ່ຽນແປງປະເພດສິນຄ້າ ພາຍຫຼັງການຢັ້ງຢືນສຸຂານາໄມພືດ;
9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 38 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ

ນອກຈາກຂໍ້ຫ້າມທົ່ວໄປ ທີ່ກໍານົດໄວ້ໃນມາດຕາ 37 ຂອງຂໍ້ຕົກລົງສະບັບນີ້ ແລ້ວ, ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ກີດໜ່ວງຖ່ວງດຶງ ຫຼື ຮັບສິນບົນ, ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ລວມໝູ່ ຫຼື ບຸກຄົນ;
2. ເປີດເຜີຍຄວາມລັບ ຂອງ ລັດ ຫຼື ທາງລັດຖະການ ລວມທັງຂໍ້ມູນຂອງຜູ້ປະກອບການ;
3. ປອມແປງເອກະສານ ຫຼື ເອກະສານບໍ່ຖືກຕ້ອງ ຕາມລະບຽບການ;
4. ອອກໃບຢັ້ງຢືນສຸຂານາໄມພືດພາຍຫຼັງສົ່ງອອກສິນຄ້າ;
5. ຂາດຄວາມຮັບຜິດຊອບ ຫຼືປະຕິບັດໜ້າທີ່ດ້ວຍຄວາມປະໝາດທີ່ກໍ່ໃຫ້ເກີດຄວາມເສຍຫາຍ;
6. ເມີນເສີຍຕໍ່ລະບຽບການ, ຫຼີກການໃນການກວດກາ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ, ແກ້ໄຂວຽກງານ ໂດຍບໍ່ຖືກຕ້ອງຕາມມາດຕະການເຕັກນິກ;
7. ເພີ່ມ ຫຼື ຫຼຸດ ອັດຕາຄ່າທໍານຽມ, ຄ່າບໍລິການວິຊາການ ຫຼື ນໍາໃຊ້ລາຍຮັບດັ່ງກ່າວ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
8. ພົວພັນ ດ້ານການເງິນ, ສ່ວນຕົວ ແລະ ຜົນປະໂຫຍດ ໃນການຂຶ້ນທະບຽນສະຖານທີ່ປະກອບການຜະລິດ, ອອກໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ ຫຼື ໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກຕໍ່;
9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ໝວດທີ 8
# ການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ

**ມາດຕາ 39 ການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ**

ກະຊວງກະສິກຳ ແລະ ປ່າໄມ້ ຄຸ້ມຄອງການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມປູກຝັງ ເປັນເຈົ້າການຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ ຂະແໜງການອຸດສາຫະກຳ ແລະ ການຄ້າ, ສາທາລະນະສຸກ, ການເງິນ, ປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານ ປ້ອງກັນ ແລະ ກັກກັນພືດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 67 ຂອງກົດໝາຍ ຊຶ່ງປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ໂດຍແມ່ນ ກົມປູກຝັງ ເປັນເສນາທິການ;
2. ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໂດຍແມ່ນ ຂະແໜງປູກຝັງ ເປັນເສນາທິການ;
3. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ ໂດຍແມ່ນ ໜ່ວຍງານປູກຝັງ ເປັນເສນາທິການ;
4. ດ່ານກັກກັນພືດ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງ ກົມປູກຝັງ**

ໃນການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ກົມປູກຝັງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ຍຸດທະສາດ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ການເຈລະຈາເຕັກນິກເປີດຕະຫຼາດ ກ່ຽວກັບ ການສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ເພື່ອສະເໜີຂັ້ນເທິງພິຈາລະນາຮັບຮອງ;
2. ສ້າງ ແລະ ຮັກສາລະບົບ ຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ແລະ ຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່ ວັດຖຸຕ້ອງຄວບຄຸມ ໃນ ສປປ ລາວ;
3. ຄົ້ນຄວ້າ, ສ້າງບົດແນະນຳ, ຄູ່ມື ໃນການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ;
4. ອອກໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກ ແລະ ໃບຢັ້ງຢືນສຸຂານາໄມພືດ ສຳລັບສົ່ງອອກຕໍ່;
5. ດຳເນີນການ ກວດກາ, ບຳບັດ, ທົດສອບ, ເກັບຕົວຢ່າງ ແລະ ວິໄຈ ສັດຕູພືດ ສຳລັບການຢັ້ງຢືນສຸຂານາໄມພືດ;
6. ຄຸ້ມຄອງກາຈ້ຳ ຂອງອົງການປ້ອງກັນພືດແຫ່ງຊາດ, ກາໝາຍ ແລະ ສິ່ງພິມສະເພາະ ສຳລັບຊຸດສິນຄ້າ ເພື່ອຮັບປະກັນຄວາມປອດໄພທາງດ້ານສຸຂານາໄມພືດ;
7. ເກັບຮັກສາ ແລະ ບັນທຶກຂໍ້ມູນ ເພື່ອເປັນບ່ອນອີງໃນການກວດສອບຍ້ອນຫຼັງ ກ່ຽວກັບແຫຼ່ງທີ່ມາຂອງຊຸດສິນຄ້າ ເປັນຕົ້ນ ການຈຳແນກປະເພດສິນຄ້າ ແລະ ຄວາມປອດໄພທາງດ້ານສຸຂານາໄມພືດ ລວມທັງ ການຈັດການ ແລະ ການຂົນສົ່ງ ຊຸດສິນຄ້າກ່ອນການສົ່ງອອກ;

8. ສືບສວນ ການແຈ້ງເຕືອນທີ່ບໍ່ມີຄວາມສອດຄ່ອງ ກ່ຽວກັບ ທຸກກໍລະນີທີ່ມີການລະເມີດ ເຊັ່ນ: ໃບຢັ້ງຢືນສຸຂານາໄມພືດ ທີ່ບໍ່ຖືກຕ້ອງ ຫຼື ປອມແປງ ຊຶ່ງອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນໍາເຂົ້າ ແຈ້ງໃຫ້ ກົມປູກຝັງ ເພື່ອເປັນບ່ອນອີງໃນການສະໜອງສໍາເນົາບົດລາຍງານຜົນໄດ້ຮັບຂອງການສືບສວນ;
9. ນໍາໃຊ້ມາດຕະການແກ້ໄຂ ໃນກໍລະນີທີ່ໄດ້ຮັບແຈ້ງ ກ່ຽວກັບ ການລະເມີດ;
10. ຮັບປະກັນທາງດ້ານອຸປະກອນ ແລະ ເຄື່ອງມືຮັບໃຊ້ ໃຫ້ແກ່ການກວດກາ, ການທົດສອບ, ການປະເມີນຊຸດສິນຄ້າ ແລະ ຂັ້ນຕອນການຈັດຕັ້ງປະຕິບັດທາງດ້ານສຸຂານາໄມພືດ;
11. ທົບທວນ ແລະ ປະເມີນຄືນ ລະບົບການຢັ້ງຢືນສຸຂານາໄມພືດແຕ່ລະໄລຍະ, ສໍາຫຼວດ, ຕິດຕາມ ແລະ ຄຸ້ມຄອງ ກິດຈະການຕ່າງໆ ກ່ຽວກັບ ການຢັ້ງຢືນສຸຂານາໄມພືດ ໃຫ້ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ;
12. ຝຶກອົບຮົມພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ ເພື່ອຮັບປະກັນທາງດ້ານບຸກຄະລາກອນ ແລະ ຊັບພະຍາກອນໃຫ້ພຽງພໍ ພ້ອມທັງກວດສອບ ພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ;
13. ພັດທະນາລະບົບຄວາມປອດໄພ ດ້ານສຸຂານາໄມພືດ ສໍາລັບຊຸດສິນຄ້າ ພາຍຫຼັງການຢັ້ງຢືນສຸຂານາໄມພືດ ແລະ ກ່ອນການສົ່ງອອກ;
14. ຂໍ້ມູນ ກ່ຽວກັບ ເງື່ອນໄຂດ້ານສຸຂານາໄມພືດ ຂອງປະເທດ ນໍາເຂົ້າ ຫຼື ຄູ່ຄ້າ ເພື່ອເປັນບ່ອນອີງແກ່ການອອກຢັ້ງຢືນສຸຂານາໄມພືດ;
15. ຮັກສາຖານຂໍ້ມູນ ກ່ຽວກັບ ການຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ;
16. ສະໜັບສະໜູນການເຈລະຈາເຕັກນິກເປີດຕະຫຼາດ;
17. ປະສານສົມທົບ ແລະ ຮ່ວມມື ກັບ ບັນດາປະເທດຄູ່ຄ້າ ແລະ ອົງການຈັດຕັ້ງສາກົນອື່ນ ໂດຍສະເພາະ ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນໍາເຂົ້າ ກ່ຽວກັບ ການກວດກາຮ່ວມກັນ, ການກໍານົດເງື່ອນໄຂດ້ານສຸຂານາໄມພືດສໍາລັບການນໍາເຂົ້າ ແລະ ປຶກສາຫາລື ກ່ຽວກັບ ວຽກງານສຸຂານາໄມພືດ ພ້ອມທັງສ້າງຕັ້ງຈຸດປະສານງານ ກ່ຽວກັບ ການແຈ້ງເຕືອນທີ່ບໍ່ສອດຄ່ອງ;
18. ກໍານົດໜ້າທີ່ ແລະ ການປະສານງານ ສໍາລັບພະນັກງານ ແລະ ເຈົ້າໜ້າທີ່ກັກກັນພືດ ທີ່ຮັບຜິດຊອບວຽກງານ ການຢັ້ງຢືນສຸຂານາໄມພືດ;
19. ປະເມີນ ວິທີການດ້ານສຸຂານາໄມພືດ ໃຫ້ມີຄວາມຖືກຕ້ອງ ແລະ ຄົບຖ້ວນ;
20. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ ແລະ ໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກຕໍ່;
2. ດໍາເນີນການກວດກາ, ການບໍາບັດ, ການທົດສອບ, ການເກັບຕົວຢ່າງ ແລະ ການວິໄຈ ສໍາລັບການຢັ້ງຢືນສຸຂານາໄມພືດ;
3. ນໍາໃຊ້ກາໝາຍ, ເຄື່ອງໝາຍ ແລະ ແບບພິມສະເພາະ ເພື່ອຮັບປະກັນຄວາມປອດໄພທາງດ້ານສຸຂານາໄມພືດ;
4. ກວດກາ ແລະ ຂຶ້ນທະບຽນສະຖານທີ່ປະກອບການຜະລິດ;
5. ເຂົ້າຮ່ວມ ແລະ ສົມທົບກັບ ກົມປູກຝັງ ໃນການກວດກາຮ່ວມກັບ ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດນໍາເຂົ້າ;

6. ເກັບຮັກສາ ແລະ ບັນທຶກຂໍ້ມູນ ເພື່ອເປັນບ່ອນອີງໃນການກວດສອບຢ້ອນຫຼັງ ກ່ຽວກັບແຫຼ່ງທີ່ມາ ຂອງຊຸດສິນຄ້າ ເປັນຕົ້ນ ການຈໍາແນກປະເພດສິນຄ້າ ແລະ ຄວາມປອດໄພທາງດ້ານສຸຂານາໄມພືດ ລວມທັງການຈັດການ ແລະ ການຂົນສົ່ງຊຸດສິນຄ້າ ກ່ອນການສົ່ງອອກ;
7. ຕິດຕາມ, ກວດກາ, ນໍາໃຊ້ມາດຕະການແກ້ໄຂ ໃນກໍລະນີທີ່ໄດ້ຮັບແຈ້ງເຕືອນ ກ່ຽວກັບການລະເມີດ;
8. ຮັບປະກັນທາງດ້ານອຸປະກອນ ແລະ ເຄື່ອງມືຮັບໃຊ້ ໃຫ້ແກ່ການກວດກາ, ການທົດສອບ, ການປະເມີນຊຸດສິນຄ້າ ແລະ ຂັ້ນຕອນການຈັດຕັ້ງປະຕິບັດທາງດ້ານສຸຂານາໄມພືດ.
9. ລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດ ວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ໃຫ້ ກົມປູກຝັງ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ແລະ ຢັ້ງຢືນສະຖານທີ່ປະກອບການຜະລິດ;
2. ເກັບຮັກສາ ແລະ ບັນທຶກຂໍ້ມູນ ເພື່ອເປັນບ່ອນອີງໃນການກວດສອບຢ້ອນຫຼັງ ກ່ຽວກັບແຫຼ່ງທີ່ມາ ຂອງຊຸດສິນຄ້າ ເປັນຕົ້ນ ການຈໍາແນກປະເພດສິນຄ້າ ແລະ ຄວາມປອດໄພທາງດ້ານສຸຂານາໄມພືດ ລວມທັງການຈັດການ ແລະ ການຂົນສົ່ງ ຊຸດສິນຄ້າກ່ອນການສົ່ງອອກ;
3. ນໍາໃຊ້ມາດຕະການແກ້ໄຂ ໃນກໍລະນີທີ່ໄດ້ຮັບແຈ້ງການ ກ່ຽວກັບ ການລະເມີດ;
4. ຮັບປະກັນທາງດ້ານອຸປະກອນ ແລະ ເຄື່ອງມືຮັບໃຊ້ ໃຫ້ແກ່ການກວດກາ, ການທົດສອບ, ການປະເມີນຊຸດສິນຄ້າ ແລະ ຂັ້ນຕອນ ການຈັດຕັ້ງປະຕິບັດທາງດ້ານສຸຂານາໄມພືດ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງ ດ່ານກັກກັນພືດ**

ໃນການຄຸ້ມຄອງວຽກງານ ສົ່ງອອກ ແລະ ສົ່ງອອກຕໍ່ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ດ່ານກັກກັນພືດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອອກໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກ ແລະ ໃບຢັ້ງຢືນສຸຂານາໄມພືດ ສໍາລັບສົ່ງອອກຕໍ່;
2. ດໍາເນີນການ ກວດກາ, ບໍາບັດ, ທົດສອບ, ເກັບຕົວຢ່າງ ແລະ ວິໄຈ ສັດຕູພືດ ສໍາລັບການຢັ້ງຢືນສຸຂານາໄມພືດ;
3. ນໍາໃຊ້ກາໝາຍ ແລະ ສິ່ງພິມສະເພາະ ເພື່ອຮັບປະກັນຄວາມປອດໄພທາງດ້ານສຸຂານາໄມພືດ;
4. ເກັບຮັກສາ ແລະ ບັນທຶກຂໍ້ມູນ ເພື່ອເປັນບ່ອນອີງໃນການກວດສອບຢ້ອນຫຼັງ ກ່ຽວກັບແຫຼ່ງທີ່ມາຂອງຊຸດສິນຄ້າ ເປັນຕົ້ນ ການຈໍາແນກປະເພດສິນຄ້າ ແລະ ຄວາມປອດໄພທາງດ້ານສຸຂານາໄມພືດ ລວມທັງການຈັດການ ແລະ ການຂົນສົ່ງ ຊຸດສິນຄ້າກ່ອນການສົ່ງອອກ;
5. ນໍາໃຊ້ມາດຕະການແກ້ໄຂ ໃນກໍລະນີທີ່ໄດ້ຮັບແຈ້ງການ ກ່ຽວກັບ ການລະເມີດ;
6. ຮັບປະກັນທາງດ້ານອຸປະກອນ ແລະ ເຄື່ອງມືຮັບໃຊ້ ໃຫ້ແກ່ການກວດກາ, ການທົດສອບ, ການປະເມີນຊຸດສິນຄ້າ ແລະ ຂັ້ນຕອນ ການຈັດຕັ້ງປະຕິບັດ ທາງດ້ານສຸຂານາໄມພືດ;
7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 44 ຄ່າທຳນຽມ ແລະ ຄ່າບໍລິການ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕ້ອງເກັບຄ່າທຳນຽມ ແລະ ຄ່າບໍລິການ ສຳລັບການ ກວດກາ, ເກັບຕົວຢ່າງ, ການວິໄຈ, ບຳບັດ, ອອກໃບຢັ້ງຢືນສຸຂານາໄມພືດ ແລະ ວຽກງານອື່ນ ຕາມທີ່ລະບຸໄວ້ໃນ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 45 ການຈັດຕັ້ງປະຕິບັດ**

ກົມປູກຝັງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

**ມາດຕາ 46 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ບຸນຂວາງ ຄຳບຸນເຮືອງ